ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 03 ສປປ

ລົງວັນທີ 14/8/2000

# ລັດຖະບັນຍັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ວ່າດ້ວຍ ພາສີທີ່ດິນ

----------------

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ຫມວດທີ່ V, ມາດຕາ 53, ຂໍ້ 2,
- ອີງຕາມກົດຫມາຍ ວ່າດ້ວຍທີ່ດິນ ສະບັບເລກທີ່ 01/97 ສພຊ, ລົງວັນທີ 12 ເມສາ 1997.
- ອີງຕາມກົດຫມາຍ ວ່າດ້ວຍ ຜັງເມືອງ ສະບັບເລກທີ່ 03/99 ສພຊ, ລົງວັນທີ 3/4/1999.
- ອີງຕາມການສະເຫນີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 14/ຄປຈ,ລົງວັນທີ 31 ກໍລະກົດ 2000 ກ່ຽວກັບສະເຫນີ ໃຫ້ອອກລັດຖະບັນຍັດວ່າດ້ວຍ ພາສີທີ່ດິນ.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະບັນຍັດ:*

### ພາກທີ I

### ຫລັກການລວມ

*ມາດຕາ 1* : ທີ່ດິນ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນເປັນກຳມະສິດ ຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຜູ້ຄຸ້ມຄອງ ຢ່າງລວມສູນ ເປັນເອກະພາບໃນທົ່ວປະເທດ ແລະ ມອບໃຫ້ບຸກຄົນ, ຄອບຄົວ ແລະ ການຈັດຕັ້ງນຳໃຊ້ຢ່າງມີປະສິດທິຜົນ ແລະ ໃຫ້ຄົນ

## ພາກທີ II
## ອັດຕາພາສີທີ່ດິນ

*ມາດຕາ 3* : ອັດຕາພາສີທີ່ດິນ ທີ່ນຳໃຊ້ຢູ່ແຕ່ລະເຂດແຕ່ລະປະເພດໄດ້ກຳນົດຄືດັ່ງລຸ່ມນີ້ :

### 1. ທີ່ດິນກະສິກຳ

| ປະເພດທີ່ດິນກະສິກຳ | ອັດຕາພາສີທີ່ດິນ ກິໂລເຂົ້າເປືອກຕໍ່ເຮັກຕາຕໍ່ປີ ແລະ ກີບຕໍ່ເຮັກຕາຕໍ່ປີ | | | | | | | | |
|---|---|---|---|---|---|---|---|---|---|
| | ເຂດທົ່ງພຽງ | | | ເຂດພູພຽງ | | | ເຂດພູດອຍ | | |
| | ເຂດຕົວເມືອງ | ເຂດເສດຖະກິດສະເພາະ | ເຂດຊົນນະບົດ | ເຂດຕົວເມືອງ | ເຂດເສດຖະກິດສະເພາະ | ເຂດຊົນນະບົດ | ເຂດຕົວເມືອງ | ເຂດເສດຖະກິດສະເພາະ | ເຂດຊົນນະບົດ |
| *I. ເນື້ອທີ່ດິນນາ :(ກິໂລ/ເຮັກຕາ)* | | | | | | | | | |
| 1. ນາຜະລິດເຂົ້າ | 25 ກລ | 22 ກລ | 20 ກລ | 22 ກລ | 20 ກລ | 18 ກລ | 20 ກລ | 18 ກລ | 16 ກລ |
| 2. ນາຖືກໄພທຳມະຊາດທຳລາຍເສຍຫາຍ ຕໍ່າກວ່າ 70%ລົງມາ | 10 ກລ | 7 ກລ | 5 ກລ | 9 ກລ | 6 ກລ | 5 ກລ | 7 ກລ | 5 ກລ | 4 ກລ |
| 3. ນາປະເປັນເຮື້ອ (ກີບ ຮຕ) | 20.000 | 20.000 | 20.000 | 15.000 | 15.000 | 15.000 | 10.000 | 10.000 | 10.000 |
| *II. ເນື້ອທີ່ໄຮ່: (ກິໂລ/ເຮັກຕາ)* | | | | | | | | | |
| 1. ນາສັກ ຫລືໄຮ່ຄົງທີ່ | 17 ກລ | 16 ກລ | 15 ກລ | 16 ກລ | 15 ກລ | 14 ກລ | 14 ກລ | 13 ກລ | 12 ກລ |
| 2. ໄຮ່ໝູນວຽນ | 20 ກລ | 18 ກລ | 17 ກລ | 19 ກລ | 17 ກລ | 15 ກລ | 17 ກລ | 15 ກລ | 14 ກລ |
| *III. ເນື້ອທີ່ສວນ:( ກີບ/ເຮັກຕາ)* | | | | | | | | | |
| 1. ປູກດອກໄມ້ | 12.000 | 10.000 | 9.000 | 11.000 | 8.000 | 7.000 | 8.000 | 7.000 | 6.000 |
| 2. ປູກໄມ້ໃຫ້ໝາກ | 9.000 | 8.000 | 7.000 | 10.000 | 9.000 | 8.000 | 7.000 | 6.000 | 5.000 |
| 3. ປູກພືດອຸດສາຫະກຳ ແລະ ພືດລົ້ມລຸກ | 13.000 | 12.000 | 11.000 | 12.000 | 10.000 | 9.000 | 10.000 | 8.000 | 7.000 |
| 4. ປູກພືດເຮັດຢາປົວພະຍາດ | 8.000 | 7.000 | 6.000 | 7.000 | 6.000 | 5.000 | 6.000 | 5.000 | 4.000 |
| 5. ປູກຜັກທຸກຊະນິດ | 10.000 | 9.000 | 8.000 | 9.000 | 8.000 | 7.000 | 6.000 | 5.000 | 4.000 |
| 6. ປູກໄມ້ ແລະພືດຕ່າງໆ | 10.000 | 9.000 | 8.000 | 9.000 | 8.000 | 7.000 | 8.000 | 7.000 | 6.000 |
| *IV. ເນື້ອທີ່ດິນລ້ຽງສັດ:(ກີບ/ຮຕ)* | | | | | | | | | |
| 1. ທົ່ງຫຍ້າທຳມະຊາດລ້ຽງສັດ | 18.000 | 15.000 | 10.000 | 15.000 | 10.000 | 8.000 | 12.000 | 8.000 | 6.000 |
| 2. ທົ່ງຫຍ້າລ້ຽງສັດໄດ້ບຸກເບີກ | 15.000 | 10.000 | 5.000 | 13.000 | 8.000 | 4.000 | 8.000 | 5.000 | 3.000 |
| 3. ຟາມລ້ຽງສັດ | 24.000 | 20.000 | 18.000 | 20.000 | 17.000 | 15.000 | 16.000 | 14.000 | 12.000 |
| 4. ໜອງ.ສະລ້ຽງສັດນ້ຳ | 20.000 | 17.000 | 16.000 | 17.000 | 16.000 | 14.0000 | 16.000 | 14.000 | 12.000 |
| V. *ເນື້ອທີ່ດິນກະສິກຳອື່ນໆ* | | | | | | | | | |
| 1. ທົ່ງຫຍ້າທີ່ບໍ່ໄດ້ລ້ຽງສັດ | 21.000 | 18.000 | 17.000 | 18.000 | 17.000 | 16.000 | 15.000 | 12.000 | 10.000 |
| 2. ທີ່ດິນກະສິກຳອື່ນໆ | 20.000 | 17.000 | 16.000 | 18.000 | 16.000 | 14.000 | 16.000 | 14.000 | 12.000 |

2. ເນື້ອທີ່ດິນປຸກສ້າງ

| ເຂດເສຍພາສີທີ່ດິນປຸກສ້າງ | ອັດຕາພາສີທີ່ດິນ ກີບຕໍ່ແມັດ(ມ$^{2}$) ຕໍ່ປີ | | | |
|---|---|---|---|---|
| | ທີ່ດິນ ທີ່ຢູ່ອາໄສ | ທີ່ດິນໂຮງງານອຸດສາຫະກຳ ແລະ ຫັດຖະກຳ | ທີ່ດິນການຄ້າ ແລະ ການບໍລິການ | ທີ່ດິນຫວ່າງເປົ່າ (ທີ່ດິນບໍ່ພັດທະນາ) |
| I. ເທດສະບານ ຫລືຕົວເມືອງ ທີ່ຂຶ້ນກັບສູນກາງ ຫລື ຂຶ້ນກັບແຂວງ | | | | |
| 1. ເຂດໃຈກາງຕົວເມືອງ | 10 ກີບ/ມ$^{2}$ | 60 ກີບ/ມ$^{2}$ | 100 ກີບ/ມ$^{2}$ | 50 ກີບ/ມ$^{2}$ |
| 2. ເຂດອ້ອມໃຈກາງຕົວເມືອງ | 8 ກີບ/ມ$^{2}$ | 40 ກີບ/ມ$^{2}$ | 80 ກີບ/ມ$^{2}$ | 30 ກີບ/ມ$^{2}$ |
| 3. ເຂດຊານເມືອງ | 6 ກີບ/ມ$^{2}$ | 20 ກີບ/ມ$^{2}$ | 60 ກີບ/ມ$^{2}$ | 20 ກີບ/ມ$^{2}$ |
| 4. ເຂດຂະຫຍາຍຕົວເມືອງ | 4 ກີບ/ມ$^{2}$ | 10 ກີບ/ມ$^{2}$ | 30 ກີບ/ມ$^{2}$ | 10 ກີບ/ມ$^{2}$ |
| II. ເທດສະບານ ທີ່ຂຶ້ນກັບເມືອງ | | | | |
| 1. ເຂດໃຈກາງຕົວເມືອງ | 8 ກີບ/ມ$^{2}$ | 50 ກີບ/ມ$^{2}$ | 80 ກີບ/ມ$^{2}$ | 40 ກີບ/ມ$^{2}$ |
| 2. ເຂດອ້ອມໃຈກາງຕົວເມືອງ | 7 ກີບ/ມ$^{2}$ | 40 ກີບ/ມ$^{2}$ | 60 ກີບ/ມ$^{2}$ | 30 ກີບ/ມ$^{2}$ |
| 3. ເຂດຊານເມືອງ | 6 ກີບ/ມ$^{2}$ | 30 ກີບ/ມ$^{2}$ | 40 ກີບ/ມ$^{2}$ | 20 ກີບ/ມ$^{2}$ |
| 4. ເຂດຂະຫຍາຍຕົວເມືອງ | 4 ກີບ/ມ$^{2}$ | 20 ກີບ/ມ$^{2}$ | 30 ກີບ/ມ$^{2}$ | 10 ກີບ/ມ$^{2}$ |
| III. ຕົວເມືອງທີ່ຂຶ້ນກັບການປົກຄອງເມືອງ. | | | | |
| 1. ເຂດໃຈກາງຕົວເມືອງ | 5 ກີບ/ມ$^{2}$ | 20 ກີບ/ມ$^{2}$ | 40 ກີບ/ມ$^{2}$ | 20 ກີບ/ມ$^{2}$ |
| 2. ເຂດຂະຫຍາຍຕົວເມືອງ | 4 ກີບ/ມ$^{2}$ | 10 ກີບ/ມ$^{2}$ | 20 ກີບ/ມ$^{2}$ | 15 ກີບ/ມ$^{2}$ |
| IV. ເຂດຊົນນະບົດ | | | | |
| 1. ບ້ານຕ່າງໆໃນເຂດທົ່ງພຽງ | 3 ກີບ/ມ$^{2}$ | 4 ກີບ/ມ$^{2}$ | 10 ກີບ/ມ$^{2}$ | 15 ກີບ/ມ$^{2}$ |
| 2. ບ້ານຕ່າງໆໃນເຂດພູພຽງ | 2 ກີບ/ມ$^{2}$ | 3 ກີບ/ມ$^{2}$ | 8 ກີບ/ມ$^{2}$ | 10 ກີບ/ມ$^{2}$ |
| 3. ບ້ານຕ່າງໆໃນເຂດພູດອຍ | 1 ກີບ/ມ$^{2}$ | 2 ກີບ/ມ$^{2}$ | 5 ກີບ/ມ$^{2}$ | 5 ກີບ/ມ$^{2}$ |
| V. ເຂດເສດຖະກິດສະເພາະ | | | | |
| 1. ເຂດໃຈກາງຕົວເມືອງ | 5 ກີບ/ມ$^{2}$ | 40 ກີບ/ມ$^{2}$ | 60 ກີບ/ມ$^{2}$ | 30 ກີບ/ມ$^{2}$ |
| 2. ເຂດອ້ອມໃຈກາງຕົວເມືອງ | 4 ກີບ/ມ$^{2}$ | 30 ກີບ/ມ$^{2}$ | 50 ກີບ/ມ$^{2}$ | 20 ກີບ/ມ$^{2}$ |
| 3. ເຂດຊານເມືອງ | 3 ກີບ/ມ$^{2}$ | 20 ກີບ/ມ$^{2}$ | 40 ກີບ/ມ$^{2}$ | 10 ກີບ/ມ$^{2}$ |
| 4. ເຂດຂະຫຍາຍຕົວເມືອງ | 2 ກີບ/ມ$^{2}$ | 10 ກີບ/ມ$^{2}$ | 20 ກີບ/ມ$^{2}$ | 8 ກີບ/ມ$^{2}$ |

## ພາກທີ III
## ການຈັດຕັ້ງປະຕິບັດ

*ມາດຕາ 4* : ມອບໃຫ້ລັດຖະບານ ເປັນຜູ້ຈັດຕັ້ງປະຕິບັດລັດຖະບັນຍັດສະບັບນີ້ ໂດຍໃຫ້ອອກດຳລັດແນະນຳໃຫ້ທ້ອງຖິ່ນ ແລະຂະແໜງການ ນຳໄປຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນເປັນຢ່າງດີ.

*ມາດຕາ 5* : ລັດຖະບັນຍັດສະບັບນີ້ ປ່ຽນແທນລັດຖະບັນຍັດ ເລກທີ່ 03/ສປປ ລົງວັນທີ 23/5/96 ແລະ ດຳລັດ ເລກທີ 50/ນຍ ລົງວັນທີ 13/3/93.

*ມາດຕາ 6* : ລັດຖະບັນຍັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

- ບັນດາຂໍ້ກຳນົດ ແລະ ລະບຽບໃດໆ ທີ່ຂັດກັບລັດຖະບັນຍັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານປະເທດ ແຫ່ງ ສປປລາວ.

**ຄຳໄຕ ສີພັນດອນ.**